ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ຫ້ອງການ

ເລກທີ 1267 / ຫກ

ນະຄອນຫຼວງວຽງຈັນ, ວັນທີ 6 ພຶດສະພາ 2025

# ໜັງສືເຊີນເຂົ້າຮ່ວມປະມູນ

1. ກະຊວງສຶກສາທິການ ແລະ ກິລາ ໄດ້ນຳໃຊ້ເງິນງົບປະມານລັດ ປະຈຳປີ 2025 ເພື່ອດຳເນີນການປະມູນເປີດກວ້າງພາຍໃນ ກ່ຽວກັບການຈັດຊື້ອຸປະກອນກິລາ, ຊຸດກິລາ ຮັບໃຊ້ການຝຶກຊ້ອມ ແລະ ແຂ່ງຂັນ ໃຫ້ຄະນະນຳ, ຄູຝຶກ ແລະ ນັກກິລາ ເຂົ້າຮ່ວມແຂ່ງຂັນກິລາອາຊຽນພາຣາເກມ ຄັ້ງທີ 13 ທີ່ປະເທດໄທ;
2. ການປະມູນຈະດຳເນີນຕາມຂັ້ນຕອນ ການປະມູນເປີດກ້ວາງພາຍໃນປະເທດ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ຜູ້ປະມູນຕ້ອງມີສຳເນົາເອກະສານໃບອະນຸຍາດດຳເນີນທຸລະກິດດ້ານການສະໜອງເຄື່ອງກິລາ ແລະ ເຄື່ອງໃຊ້ຫ້ອງການ ແລະ ໃບມອບພັນທະອາກອນ ປະຈຳປີ 2024 ທີ່ຖືກຕ້ອງຕາມກົດໝາຍ;
4. ບໍລິສັດທີ່ມີເງື່ອນໄຂເໝາະສົມ ແລະ ມີຄວາມສົນໃຈສາມາດຕິດຕໍ່ພົວພັນ ແລະ ເຮັດໜັງສືເຈດຈຳນົງຊື້ເອກະສານປະມູນໄດ້ທີ່ ພະແນກບໍລິຫານ ແລະ ຄົ້ນຄວ້າສັງລວມ ກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ກະຊວງສຶກສາທິການ ແລະ ກິລາ ໂທລະສັບ 021 216017, 020 98983434 ໃນໂມງລັດຖະການ, ເລີ່ມຂາຍຊອງປະມູນວັນທີ 12 ພຶດສະພາ 2025 ເປັນຕົ້ນໄປ, ໃນລາຄາ 500.000 ກີບ/ຊອງ, ຈຳນວນເງິນດັ່ງກ່າວ ຈະບໍ່ມີການສົ່ງຄືນ (ວິທີຊຳລະຕ້ອງຈ່າຍເປັນເງິນສົດ);
5. ຊອງປະມູນຕ້ອງສົ່ງກ່ອນເວລາ 10:00 ໂມງ ຂອງວັນທີ 17 ມິຖຸນາ 2025 ທີ່ຫ້ອງປະຊຸມກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ຊັ້ນ 04 (ຫ້ອງ 414) ຕຶກກະຊວງສຶກສາທິການ ແລະ ກິລາ, ເຂດສະໜາມກິລາເຈົ້າອານຸວົງ. ຊອງປະມູນໃດສົ່ງຊ້າເກີນເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາດຽວກັນໂດຍຊ້ອງໜ້າຄະນະກຳມະການຈັດຊື້ ກະຊວງສຶກສາທິການ ແລະ ກິລາ, ຕາງໜ້າກະຊວງການເງິນ ແລະ ຕົວແທນຂອງຜູ້ເຂົ້າຮ່ວມແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມ;
6. ຜູ້ປະມູນຕ້ອງມີເງິນຄ້ຳປະກັນຊອງປະມູນໃນອັດຕາ 2% ຂອງມູນຄ່າທີ່ສະເໜີໃນການປະມູນ ເປັນໜັງສືຄ້ຳປະກັນ ຈາກທະນາຄານ.

ເຊັນແທນ. ຫົວໜ້າຫ້ອງການ

ຫ້ອງການ

ພົນປະແສງ ທິບພະວົງ

สแกนด้วย CamScanner